# ບົດຂ່າວ

## ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ໄດ້ລົງເຄື່ອນໄຫວວຽກງານ ຢູ່ 04 ແຂວງພາກເໜືອຄື: ແຂວງ ອຸດົມໄຊ, ແຂວງບໍ່ແກ້ວ, ຫຼວງນໍ້າທາ ແລະ ແຂວງຜົ້ງສາລີ. ໃນລະຫວ່າງວັນທີ 25 ເມສາ ຫາ 18 ພຶດສະພາ 2022

ໃນລະຫວ່າງວັນທີ 25 ເມສາ ຫາ 18 ພຶດສະພາ 2022 ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ (ຂສລ) ໄດ້ລົງເຄື່ອນໄຫວເພື່ອຈັດພິທີການມອບ-ຮັບໃບອະນຸຍາດເຂົ້າເປັນສະມາຊິກ ບໍລິສັດ ຂສລ ແລະ ກວດກາຊຸກຍູ້ການຈັດຕັ້ງປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອຂອງສະມາຊິກ) ຢູ່ 04 ແຂວງພາກເໜືອຄື: ແຂວງອຸດົມໄຊ, ແຂວງບໍ່ແກ້ວ, ຫຼວງນໍ້າທາ ແລະ ແຂວງຜົ້ງສາລີ. ໂດຍການນໍາພາຂອງທ່ານ ສີດາ ທັມມະວົງ ເປັນຫົວໜ້າຄະນະ ພ້ອມທັງເປັນ ຮອງຜູ້ອໍານວຍການໃຫຍ່ບໍລິສັດ ຂໍ້ມູນຂ່າວສານສິນເຊື່ອແຫ່ງ ສປປ ລາວ ພ້ອມດ້ວຍພະນັກງານຈາກບໍລິສັດ ຂສລ ແລະ ພະນັກງານຈາກທະນາຄານແຫ່ງ ສປປ ລາວ (ທຫລ) ສາຂາ ອຸດົມໄຊ.




ໃນການລົງເຄື່ອນໄຫວຄັ້ງນີ້ ໄດ້ມີພິທີການມອບ-ຮັບໃບອະນຸຍາດເຂົ້າເປັນ ສະມາຊິກ ບໍລິສັດ ຂສລ ຈຳນວນ 03 ແຫ່ງ ຄື: ສກຈບ ແດນເໜືອ, ສສງ ເມືອງຜາອຸດົມ ແລະ ສສງ ເມືອງສິງ. ຊຶ່ງວິຊາການທີ່ກ່ຽວຂ້ອງໄດ້ແນະນຳບັນດາລະບຽບການຕ່າງໆເປັນຕົ້ນແມ່ນ: ດຳລັດວ່າດ້ວຍວຽກງານຂໍ້ມູນຂ່າວສານສິນເຊື່ອ ສະບັບເລກທີ 224/ລບ ພ້ອມດ້ວຍລະບຽບການອື່ນໆອີກ ແລະ ຝຶກອົບຮົມການນຳໃຊ້ລະບົບ ຂໍ້ມູນຂ່າວສານສິນເຊື່ອ, ແນະນຳການເກັບກຳຂໍ້ມູນ ແລະ ປ້ອນຂໍ້ມູນຂອງລູກຄ້າຕາມຮູບແບບ IFF, ແນະນຳການນຳໃຊ້ລະບົບ ຂໍ້ມູນຂ່າວສານສິນເຊື່ອ ເຊັ່ນ: ການເຂົ້າຄົ້ນຫາລູກຄ້າໃນຮູບແບບບຸກຄົນ-ນິຕິບຸກຄົນ, ການເຂົ້າຄົ້ນຫາຂໍ້ມູນສາທາລະນຸປະໂພກ(ໄຟຟ້າ), ການຄົ້ນຫາຂໍ້ມູນການໃຫ້ຄະແນນສິນເຊື່ອ, ການນຳສົ່ງລາຍງານຂໍ້ມູນຂຶ້ນລະບົບ, ການສອບ

ຖາມຂໍ້ຂ້ອງໃຈຕ່າງໆຂອງສະມາຊິກ, ທົດລອງວິທີການນຳໃຊ້ລະບົບ ຂໍ້ມູນຂ່າວສານສິນເຊື່ອ ເພື່ອແນ່ໃສ່ສ້າງຄວາມເຂົ້າໃຈອັນເລິກເຊິ່ງ, ກ່ຽວກັບວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ໃຫ້ສາມາດຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງມີຄຸນນະພາບ.




ນອກຈາກນັ້ນ, ຄະນະຍັງໄດ້ກວດກາຊຸກຍູ້ ການຈັດຕັ້ງປະຕິວັດວຽກງານຂໍ້ມູນຂ່າວສານສິນເຊື່ອ ຂອງບັນດາສະຖາບັນການເງິນຈຳນວນ 09 ແຫ່ງ. ໃນນັ້ນມີ ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ 02 ແຫ່ງຄື: ສກຈຮ ພັດທະນາອຸດົມໄຊ ແລະ ສກຈຮ ພັດທະນາຜົ້ງສາລີ; ສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ 05 ແຫ່ງຄື: ສກຈບ ໄຊນິຍົມ, ສກຈບ ໄຊຍະວົງແສງ, ສກຈບ ນະຄອນ, ສກຈບ ສົມບູນຊັບ ແລະ ສກຈບ ໝັ້ນຄົງ; ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 02 ແຫ່ງຄື: ສສງ ຄອນຈັນ ແລະ ໂຮມຊັບພັດທະນາ. ຊຶ່ງໄດ້ລົງເລິກແນະນຳການປະຕິບັດລະບອບການລາຍງານຂໍ້ມູນ ແລະ

ແກ້ໄຂຂໍ້ມູນໃຫ້ຖືກຕ້ອງຊັດເຈນ ຕາມຂໍ້ກຳນົດກົດລະບຽບຂອງວຽກງານຂໍ້ມູນຂ່າວສານສິນເຊື່ອ ແລະ ແນະນຳວິທີການນຳໃຊ້ຂໍ້ມູນສິນເຊື່ອປະກອບເຂົ້າໃນການພິຈາລະນາສິນເຊື່ອ;

ພ້ອມດຽວກັນກໍໄດ້ປະຊຸມປຶກສາຫາລື ແລະ ແນະນຳວິທີການປັບປຸງບັນຫາກ່ຽວກັບບັນດາຂໍ້ມູນຂອງສະມາຊິກທີ່ໄດ້ນຳສົ່ງລາຍງານມາຍັງຜິດພາດຕ່າງໆ ເພື່ອໃຫ້ຄຸນນະພາບຂອງຂໍ້ມູນມີຄວາມຖືກຕ້ອງ, ຊັດເຈນ ແລະ ປະຕິບັດວຽກງານຂໍ້ມູນຂ່າວສານສິນເຊື່ອໃຫ້ຖືກຕ້ອງຕາມລະບຽບຂອງ ຂສລ ໄດ້ວາງອອກ .




ບົດຂ່າວ ແລະ ພາບໂດຍ: ພະແນກບໍລິຫານ ແລະ ສັງລວມ (ຂສລ)